

## ຄວາມເປັນມາ

ອົງການເກື້ອຝັນເດັກ ໄດ້ສ້າງຕັ້ງຂຶ້ນຢ່າງເປັນທາງການທີ່ປະເທດສະວິສເຊີແລນ ເມື່ອປີ ຄ.ສ.2003 ໂດຍມີຄວາມປະສົງແລະແຮງດົນໃຈໃນການໃຫ້ຄວາມຊ່ວຍເຫຼືອເດັກແລະເຍົາວະຊົນຜູ້ດ້ອຍໂອກາດໃນເຂດອະນຸພູມີພາກລຸ່ມແມ່ນ້ຳຂອງ ອັນເປັນສູນກາງພູມີພາກທີ່ເກີດວິກິດການດ້ານມະນຸດສະທຳ ທັງໃນດ້ານການສຶກສາ ຄຸນນະພາບຊີວິດ ແລະສິ່ງແວດລ້ອມ ໂດຍສະເພາະໃນກຸ່ມເດັກແລະເຍົາວະຊົນທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດ ແລະໄດ້ຈົດທະບຽນຢ່າງເປັນທາງການໃນປະເທດໄທເປັນ ມູນນິທິເກື້ອຝັນເດັກ ເມື່ອປີ ຄ.ສ.2005

## ສະຖານະການໃນປະເທດລຸ່ມນ້ຳຂອງ




**ປະເທໄທ :** ມີເດັກນ້ອຍຫຼາຍກວ່າ 1 ລ້ານຄົນທີ່ຕ້ອງການຄວາມຊ່ວຍເຫຼືອສະເພາະທາງແລະຄຸ້ມຄອງຄວາມເປັນມະນຸດຂອງພວກເຂົາ ຊຶ່ງພວກເຂົາຄື ເດັກກຳພ້າ ເດັກຂ້າງທາງ ແຮງງານເດັກ ອື່ນໆອີກຫຼາຍ ຍັງມີເດັກນ້ອຍຈຳນວນຫຼາຍທີ່ຍັງບໍ່ສາມາດເຂົ້າເຖິງການສຶກສາຂັ້ນພື້ນຖານ

**ປະເທດກຳປູເຈຍ :** ນ້ອຍກວ່າ50% ຂອງເດັກໃນປະເທດທີ່ໄດ້ຮັບການສຶກສາຂັ້ນປະຖົມແລະປະມານ45% ຂອງເດັກໃນປະເທດກຳປູເຈຍຍັງປະສົບກັບບັນຫາການກິນອາຫານທີ່ບໍ່ຖືກສຸຂະອະນາໄມ

**ປະເທດມຽນມ່າ :** 1 ໃນ 10 ຂອງເດັກເກີດໃໝ່ໃນປະເທດມຽນມ່າຕາຍໃນຕອນເປັນເດັກອ່ອນ, ປະມານ 30% ຂອງເດັກທັງໝົດໃນພື້ນທີ່ສົງຄາມໃນພະມ່າຕາຍກ່ອນອາຍຸ 5 ປີ

**ປະເທດລາວ :** 20% ຂອງໝູ່ບ້ານທັງໝົດໃນປະເທດລາວຍັງບໍ່ມີໂຮງຮຽນ ແລະມີພຽງ15% ຂອງປະຊາກອນທັງໝົດຂອງປະເທດທີ່ໄດ້ຮັບການສຶກສາຂັ້ນປະຖົມສຶກສາແລະ ພຽງ 5% ເທົ່ານັ້ນທີ່ໄດ້ຮຽນເຖິງຂັ້ນມັດທະຍົມຕົ້ນ

## ແນວທາງໃນການດຳເນີນງານ

ສົ່ງເສີມຊຸມຊົນດ້ອຍໂອກາດໃນກຸ່ມປະເທດອະນຸພູມີພາກລຸ່ມແມ່ນ້ຳຂອງ ເພື່ອຍົກລະດັບຄຸນນະພາບຊີວິດໂດຍມູນນິທິທຳງານຮ່ວມກັບຊຸມຊົນໃນການພັດທະນາດ້ານສຸຂະພາບແລະສ້າງໂອກາດທາງການສຶກສາໃຫ້ກັບເດັກ ພ້ອມທັງເພີ່ມຄວາມຊຳນານທາງອາຊີບເພື່ອຄອບຄົວ

*"ໃຫ້ປາຂ້ອຍໜຶ່ງຕົວ ຂ້ອຍມີປາກິນໜຶ່ງມື້ ສອນຂ້ອຍຫາປາ ຂ້ອຍມີປາກິນຕະຫຼອດໄປ"* ຢ່າງໃດກໍ່ຕາມການທີ່ຈະຊ່ວຍໃຫ້ປະສົບຄວາມສຳເລັດໃນດ້ານການພັດທະນານັ້ນ ບໍ່ໄດ້ຢູ່ທີ່ການໃຫ້ປາ ຫຼືສອນໃຫ້ຮູ້ການຫາປາຢ່າງດຽວ ແຕ່ຕ້ອງເຮັດໃຫ້ພວກເຂົາເຂົ້າໃຈວ່າຈຳເປັນຕ້ອງມີປາຫຼືບໍ່ ຫຼັກສຳຄັນທີ່ນຳໄປສູ່ການພັດທະນາທີ່ຍືນຍົງຂຶ້ນຢູ່ກັບການຕັ້ງໃນຟັງແລະເຂົ້າໃຈໃນຄວາມຈຳເປັນຂອງຊຸມຊົນ ຊຶ່ງເຮົາໃຊ້ຂະບວນການພັດທະນາຈາກລຸ່ມຂຶ້ນເທິງ ຊຶ່ງເຮົາມຸ້ງໝາຍໄປທີ່ຄວາມຈຳເປັນຂອງຊຸມຊົນເປັນທີ່ຕັ້ງ

**Child's Dream Foundation**
**238/3 Wualai Road**
**T. Haiya, A. Muang**
**Chiang Mai 50100, Thailand**

ຫຼັງຈາກທີ່ໄດ້ຮຽນຮູ້ຊຸມຊົນແລະມີຄວາມສຳພັນທີ່ດີແລ້ວ ເຮົາຈະເລີ່ມໃຫ້ການຊ່ວຍເຫຼືອຕາມຄວາມຈຳເປັນພື້ນຖານຂອງເດັກກ່ອນເປັນສິ່ງແລກ ຈາກນັ້ນເຮົາຈະເບິ່ງຄວາມເປັນໄປໄດ້ໃນສ່ວນເພີ່ມເຕີມເພື່ອພັດທະນາຕົວຊຸມຊົນອີງຕາມຄວາມຈຳເປັນເຊັ່ນກັນ

## ອົງການເກື້ອຝັນເດັກເຮັດຫຍັງແນ່??

ການທຳງານຂອງອົງກອນໄດ້ແບ່ງຮູບແບບງານອອກເປັນສາມກຸ່ມງານຄື ງານດ້ານສຸຂະພາບ ງານດ້ານການສຶກສາຂັ້ນພື້ນຖານ ແລະງານການສຶກສາໃນລະດັບອຸດົມສຶກສາຫຼືສູງກວ່າ

**ງານດ້ານສຸຂະພາບ :** ເພື່ອເຮັດໃຫ້ຈຳນວນການຕາຍຂອງເດັກນ້ອຍລົງແລະສົ່ງເສີມໃຫ້ເດັກເຂົ້າເຖິງການບໍລິການດ້ານການຮັກສາ

**ງານດ້ານການສຶກສາຂັ້ນພື້ນຖານ :** ເພື່ອຂະຍາຍໂອກາດທາງການສຶກສາໃນຂັ້ນພື້ນຖານແລະເພື່ອເຮັດໃຫ້ການຕົກເປັນເຄື່ອງມືທີ່ບໍ່ເປັນທຳນ້ອຍລົງ

**ງານດ້ານການສຶກສາລະດັບອຸດົມສຶກສາ :** ພັດທະນາອາຊີບໃຫ້ຫຼາກຫຼາຍແລະສ້າງໂອກາດໃນການສ້າງລາຍຮັບ ພ້ອມທັງການສອນຄວາມຊຳນານອື່ນທີ່ຈຳເປັນຕາມຄວາມຕ້ອງການຂອງຕະຫຼາດ ແລະສອນຄວາມຮູ້ທີ່ຈຳເປັນ




ຫຼາຍກວ່າ 40,000 ຄົນໃນມຽນມ່າໄດ້ຮັບຄວາມຊ່ວຍເຫຼືອໃນໂຄງການປ້ອງກັນໄຂ້ມາເລເລຍ ໂດຍການໃຫ້ຄວາມຮູ້ການຮັກສາຊຶ່ງມີເຄື່ອງມືແລະຢາຢ່າງຄົບລະບົບ, ເດັກຫຼາຍກວ່າ 50,000 ຄົນໃນມຽນມ່າທີ່ມີອາຍຸນ້ອຍກວ່າ 12 ປີ ໄດ້ຮັບວິຕາມິນ ເອ ແລະຢາຂ້າພະຍາດ ເດັກຫຼາຍກວ່າ 58,000 ຄົນໃນມຽນມ່າທີ່ມີອາຍຸນ້ອຍກວ່າ 14 ປີ ໄດ້ຮັບວັກຊິນປ້ອງກັນໂລກ ແລະຫຼາຍກວ່າ 40,000 ຄົນ ໄດ້ຮັບການຕິດຕາມແລະເບິ່ງແຍງຮັກສາດ້ານສຸຂະພາບອະນາໄມຈາກອາສາຂອງເຮົາທີ່ມີຈຳນວນເຖິງ 200 ຄົນ, ເດັກ 566 ຄົນແລ້ວທີ່ໄດ້ຮັບການຊ່ວຍເຫຼືອໃນການຜ່າຕັດຊ່ວຍຊີວິດ

ເດັກນັກຮຽນຫຼາຍກວ່າ 30,000 ຄົນ ໄດ້ຮັບການສະໜັບສະໜູນເຄື່ອງຂຽນແລະອຸປະກອນການຮຽນ ພ້ອມທັງສະໜັບສະໜູນອຸປະກອນກິລາ ນາຍຄູຫຼາຍກວ່າ 2,000 ຄົນໄດ້ຮັບການສະໜັບສະໜູນອຸປະກອນແລະສື່ເພື່ອການສອນ ເຮົາໄດ້ສ້າງສູນການສຶກສາເດັກກ່ອນໄວຮຽນ ຫຼາຍກວ່າ 50 ແຫ່ງ ແລະສະໜັບສະໜູນເດັກນັກຮຽນຊັ້ນປະຖົມສຶກສາແລະມັດທະຍົມຕົ້ນໂດຍປະມານ 10,000 ຄົນແລະເຮົາຍັງມີໂຄງການຫໍພັກແກ່ເດັກນັກຮຽນເຖິງ 600 ຄົນ

ນັກຮຽນຈຳນວນ 72 ຄົນທີ່ໄດ້ຮັບທຶນການສຶກສາຈາກເຮົາທີ່ກຳລັງຮຽນຢູ່ໃນປະເທດໄທແລະຮົງກົງ ນັກຮຽນເກົ່າຈຳນວນເຖິງ 380 ຄົນກຳລັງສຶກສາຢູ່ໃນວິດທະຍາໄລເຖິງ 3 ແຫ່ງທີ່ເຮົາໄດ້ໃຫ້ການສະໜັບສະໜູນ ມີນັກຮຽນຈຳນວນເຖິງ 20 ຄົນທີ່ໄດ້ຮັບໂອກາດກຽມຄວາມພ້ອມສຳລັບການເຂົ້າຮຽນຕໍ່ໃນລະດັບມັດທະຍົມປາຍ ມີນັກຮຽນເຖິງ 60 ຄົນຢູ່ລະຫວ່າງການຝຶກອົບຮົມໃນການເພີ່ມຄວາມຊຳນານເພື່ອເພີ່ມໂອກາດດ້ານອາຊີບແລະມີນັກຮຽນເຖິງ 20 ຄົນທີ່ກຳລັງຢູ່ໃນລະຫວ່າງຝຶກຫັດງານກັບບໍລິສັດຕ່າງໆ

## ທ່ານຊ່ວຍເຫຼືອເຮົາໄດ້ແນວໃດ

ທ່ານສາມາດເປັນອີກໜຶ່ງຄົນ ທີ່ຈະຊ່ວຍສານຝັນຂອງເດັກໆເຫຼົ່ານັ້ນໃຫ້ເປັນຈິງໄດ້ ໂດຍການບໍລິຈາກເງິນເພື່ອສະໜັບສະໜູນການທຳງານຂອງອົງການເກື້ອຝັນເດັກ ເງິນບໍລິຈາກທັງໝົດຈະຖືກນຳໄປໃຊ້ໃຫ້ເກີດປະໂຫຍດສູງສຸດກັບເດັກໃນໂຄງການຕ່າງໆ ຊຶ່ງເປັນຄວາມຕັ້ງໃຈຈິງຈາກການເຮັດງານຂອງເຮົາ ການບໍລິຈາກເງິນສາມາດທຳໄດ້ຫຼາຍວິທີໂດຍ ການບໍລິຈາກເປັນ

ເງິນສົດ, ສາມາດບໍລິຈາກຜ່ານທາງບັນຊີທະນາຄານ ບັດເຄດິດ ເຊັກ ແລະ PayPal ສຳລັບປະເທດສະວິສເຊີແລນ ສະຫະລັດອາເມລິກາ ອົສຕຣາລີ ຮົງກົງ ແລະເນເທີແລນ ໃຫ້ສິດນຳໄປຫຼຸດພາສີໄດ້

ກະລຸນາສຶກສາວິທີການຈາກເວບໄຊຂອງເຮົາທີ່ www.childsdream.org ເພື່ອເປັນແນວທາງໃນການບໍລິຈາກແລະຫຼຸດພາສີ